State of California—Health and Human Services Agency
Department of Health Care Services

MICHELLE BAASS
*DIRECTOR*

GAVIN NEWSOM
*GOVERNOR*

# ຂ່າວທີ່ສຳຄັນກ່ຽວກັບການເພີ່ມຂຶ້ນຂອບເຂດຈຳກັດຊັບສິນຂອງ Medi-Cal

ສະບາຍດີຜູ້ສະໝັກຂອງ Medi-Cal ທີ່ຮັກແພງ:

ກົດໝາຍໃໝ່ California ເພີ່ມຈຳນວນຊັບສິນທັງໝົດ (ຊັບສິນ ແລະ ເງິນ) ທີ່ບຸກຄົນ ຫຼື ຄອບຄົວສາມາດມີໄດ້ ແລະຍັງມີສິດຮັບ Medi-Cal ໄດ້ອີກ. ຊັບສິນທີ່ພວກເຮົານັບລວມມີບັນຊີທະນາຄານ, ເງິນສົດ, ຍານພາຫະນະສຳຮອງ ແລະ ເຮືອນ ແລະ ຊັບພະຍາກອນການເງິນອື່ນໆ.

**ຂອບເຂດຈຳກັດຊັບສິນສຳລັບ Medi-Cal ຈະເພີ່ມຂຶ້ນໃນເດືອນກໍລະກົດ ທີ 1, 2022**
ຂອບເຂດຈຳກັດສຳລັບຊັບສິນທີ່ພວກເຮົານັບໃນເວລາທີ່ພວກເຮົາຕັດສິນໃຈວ່າທ່ານມີຄຸນສົມບັດສຳລັບ Medi-Cal ຈະເພີ້ມຂຶ້ນໃນ **ເດືອນກໍລະກົດ ທີ 1, 2022**.
ຈຳນວນມູນຄ່າແມ່ນຂຶ້ນກັບຈຳນວນຄົນໃນຄົວເຮືອນຂອງທ່ານ:

| ຈຳນວນຄົນໃນຄົວເຮືອນ | ຈຳກັດຊັບສິນເກົ່າ | ຈຳກັດຊັບສິນໃໝ່ |
|---|---|---|
| 1 ຄົນ | $2,000 | **$130,000** |
| 2 ຄົນ (ແຕ່ກ່ອນເອີ້ນວ່າ   ຄູ່”) | $3,000 | **$195,000** |
| ແຕ່ລະຄົນພິເສດ (ເຖິງ      ຄົນ) | $150 | **$65,000** |

ຖ້າທ່ານສະໝັກສຳລັບ Medi-Cal ໃນເດືອນມິຖຸນາ, ກ່ອນເດືອນມິຖຸນາ ທີ່ 30, 2022 ແລະ ຊັບສິນຂອງທ່ານເກີນຂອບເຂດຈຳກັດຂອງຊັບສິນເກົ່າ, ເຂດປົກຄອງຂອງທ່ານຈະຕັດສິນການມີສິດໄດ້ຮັບຂອງທ່ານສຳລັບເດືອນກໍລະກົດ 2022 ເປັນຕົ້ນໄປ. ຖ້າພວກເຮົາອະນຸມັດ Medi-Cal ຂອງທ່ານພາຍໃນ ຫຼື ຫຼັງຈາກເດືອນກໍລະກົດ ທີ່ 1, 2022, ພວກເຮົາຈະສົ່ງຈົດໝາຍຫາທ່ານເພື່ອແຈ້ງການຕັດສິນໃຈຂອງພວກເຮົາໃຫ້ແກ່ທ່ານ.

ຖ້າຊັບສິນຂອງທ່ານເກີນຂອບເຂດຈຳກັດທີ່ຈະມີຄຸນສົມບັດສຳລັບ Medi-Cal ຈາກເດືອນມັງກອນ ທີ່ 1, 2022 ຫາເດືອນມິຖຸນາ ທີ່ 30, 2022 ແຕ່ແມ່ນຕ່ຳກວ່າຂອບເຂດຈຳກັດຊັບສິນໃຫມ່, ຕອນນີ້ທ່ານອາດຈະມີສິດໄດ້ຮັບ Medi-Cal. ຖ້າທ່ານຄິດວ່ານີ້ແມ່ນຄວາມຈິງສຳລັບທ່ານ, ທ່ານສາມາດສະໝັກຄືນໃຫມ່ສຳລັບ Medi-Cal ໄດ້:

- **ດ້ວຍຕົນເອງ ຫຼື ທາງໂທລະສັບ.** ໄປຫາ ຫຼື ໂທຫາຫ້ອງການເຂດປົກຄອງທ້ອງຖິ່ນຂອງທ່ານ.

Department of Health Care Services
Medi-Cal Eligibility Division
P.O. Box 997417 MS4607
Sacramento, CA 95899-7417
Internet Address: http://www.DHCS.ca.gov

- **ທາງໄປສະນີ ຫຼື ທາງອອນລາຍ.** ຊອກຫາຄໍາຮ້ອງສະໝັກໃນເວັບໄຊທ໌ຂອງ Covered California ທີ່ https://www.coveredca.com. ສົ່ງໃບສະໝັກທາງອອນລາຍ ຫຼື ພິມ ແລະ ສົ່ງໄປໃຫ້ຫ້ອງການເຂດປົກຄອງທ້ອງຖິ່ນຂອງທ່ານ.

ບັນຊີລາຍຊື່ຂອງຫ້ອງການຂອງເຂດປົກຄອງທ້ອງຖິ່ນມາພ້ອມກັບຈົດໝາຍສະບັບນີ້. ຫຼື ໄປທີ່ເວັບໄຊທ໌ຂອງ DHCS ທີ່ https://www.dhcs.ca.gov/services/medi-cal/Pages/CountyOffices.aspx.

**ມີຄໍາຖາມບໍ?**
ຖ້າທ່ານມີຄໍາຖາມກ່ຽວກັບການປ່ຽນແປງນີ້ ຫຼື ຕ້ອງການຄວາມຊ່ວຍເຫຼືອ, ກະລຸນາຕິດຕໍ່ຫ້ອງການເຂດປົກຄອງທ້ອງຖິ່ນຂອງທ່ານ. ສໍາລັບຄໍາຖາມທົ່ວໄປກ່ຽວກັບ Medi-Cal, ໂທຫາສາຍດ່ວນຂອງ Medi-Cal ທີ່ **1-800-541-5555**. ໂທຟຣີ.

ຂອບໃຈ,

Department of Health Care Services
ລັດ California